
ຫລວງພໍ່ໂພສີສຸຣິຍະ ເຂມະຣະໂຕ

ບິດຂໍຂະມາກັມ

ວັດຣິ່ມໂພທິທັມ




ສັຈທັມ ຄວາມຈິງ
ເດີມແຫ່ງຄວາມບໍ່ຍຶດຕິດ
ຂອງທຸກສິ່ງທຸກຢ່າງ

ແຈກລ້າ ຫ້າມຊື້ຂາຍຫຼືນຳໄປໃຊ້ໃນດ້ານທຸລະກິດ

ຫລວງພໍ່ໂພສີສຸຣິຍະ ເຂມະຣະໂຕ

ບົດຂໍຂະມາກັມ

ວັດຣິ່ມໂພທິທັມ



ສັຈຈະທັມເດີມແທ້ແຫ່ງຄວາມບໍ່ຍຶດຕິດ

ຂອງທຸກສິ່ງທຸກຢ່າງ

ໃຫ້ລ້າ ຫ້າມຊື້ຂາຍຫຼືນຳໄປໃຊ້ໃນດ້ານທຸລະກິດ

ສາມາດພິມແຈກຈ່າຍເຜີຍແຜ່ໂດຍບໍ່ຕ້ອງຂໍອະນຸຍາດ

(ຫ້າມແກ້ໄຂປ່ຽນແປງ)

ບົດຂໍຂະມາກັມ

ຫລວງພໍ່ໂພສີສຸຣິຍະ ເຂມະຣະໂຕ

ວັດຣົ່ມໂພທິທັມ

ບ້ານຫລັກຮ້ອຍຫົກສິບ ຕຳບົນໜອງຫີນ

ອຳເພີ ໜອງຫີນ ຈັງຫວັດເລີຍ 42190

www.rombodhidharma.com

ບຸນມີ ວາດສະໜາມີ ແຕ່ກັມບັງ
ໃຫ້ຂໍຂະມາກັມ

ເພື່ອຫຼຸດຜ່ອນກັມວິບາກ ທີ່ປິດກັ້ນ ປິດບັງ ບໍ່ໃຫ້ສະຫວ່າງ
ສະໄຫວ ໃນພຣະສັຈຈະທັມຄວາມຈິງ

ເປັນການຫຼຸດຜ່ອນອຸປະສັກ ແລະ ບັນຫາທັງຫຼາຍໃນຊີວິດ
ທີ່ມາຈາກກັມ ແລະ ຜົນຂອງກັມ ທັງໃນອະດີດ ແລະ ປະຈຸບັນ

ສາມາດກ່າວຄຳຂໍຂະມາກັມໄດ້ທຸກມື້ ທຸກເວລາ ທຸກໜ້ອງ
ທຸກບ່ອນ ຕາມຄວາມເໝາະສົມ

ໃຜມີກັມປະເພດໃດ ຂໍຂະມາແຕ່ກັມປະເພດນັ້ນກໍ່ໄດ້
ບໍ່ເວົ້າທັງໝົດກໍ່ໄດ້ ຫຼື ກ່າວຄຳຂໍຂະມາກັມ ໄປເທື່ອລະເລື່ອງ
ສອງເລື່ອງກໍ່ໄດ້

ຫລວງພໍ່ໂພສີສຸຣິຍະ ເຂມະຣະໂຕ

ຂໍຂະມາກັມ

(ຂາບ 3 ເທື່ອ)

ນະໂມຕັດສະ ພະຄະວະໂຕ ອະຣະຫະໂຕ ສັມມາສັມພຸດທັດສະ

(ເວົ້າ 3 ເທື່ອ)

ພຸດທັງ ສະຣະນັງ ຄັດສາມິ

ທັມມັງ ສະຣະນັງ ຄັດສາມິ

ສັງຄັງ ສະຣະນັງ ຄັດສາມິ

(ເວົ້າ 3 ເທື່ອ)

ຂໍນອບນ້ອມ ຕໍ່ອົງພຸດທະ ອົງມະຫາພຸດທະ

ພຣະປັດເຈກກະພຸດທະເຈົ້າທັງຫຼາຍ ພຣະມະຫາໂພທິສັດທັງຫຼາຍ

ພຣະອໍຣະຫັນທັງຫຼາຍ ໝູ່ເຫລົ່າພຣະອະຣິຍະເຈົ້າທັງຫຼາຍ

ອົງບໍຣິມມະຄູທັງໝົດທັງສິ້ນ

ອົງຄຸນທັງຫຼາຍ ຂໍໃຫ້ໂຜດຊົງເປັນປະທານ

ກັມລ່ວງເກີນ ອົງຄຸນ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍປະໝາດ ປາມາດ ລ່ວງເກີນ ບຽດບຽນ

ຕໍ່ອົງພຸດທະ ອົງມະຫາພຸດທະ

ພຣະປັດເຈກກະພຸດທະເຈົ້າ ພຣະມະຫາປັດເຈກກະພຸດທະເຈົ້າ

ພຣະໂພທິສັດ ພຣະມະຫາໂພທິສັດທັງຫຼາຍ

ພຣະອໍຣະຫັນ ພຣະມະຫາອໍຣະຫັນທັງຫຼາຍ

ອົງບໍຣິມມະຄູທັງຫຼາຍ ໝູ່ເຫລົ່າຄູບາອາຈານທັງຫຼາຍ

ພຣະອະຣິຍະເຈົ້າທັງຫຼາຍ ແລະ ອົງຄຸນທັງໝົດທັງສິ້ນ

ທີ່ໄດ້ເຄີຍປະໝາດ ປາມາດ ລ່ວງເກີນ ບຽດບຽນ ທຳຮ້າຍ ທຳລາຍ

ຕໍ່ພຣະສາສໜາ ຕໍ່ໝູ່ສົງ ຕໍ່ນັກບວດ ຕໍ່ຜູ້ມີສິລມີທັມ

ຕໍ່ອົງມະຫາບາຣະມີ ຕໍ່ສັນຍາລັກຮູບເໝືອນແຫ່ງອົງຄຸນທັງຫຼາຍ
ຕໍ່ສັຈຈະທັມຄວາມຈິງທັງຫຼາຍ

ຫຼື ການທຳລາຍຄຳພີໃບລານ ໜັງສືຕຳລາ

ທີ່ບັນທຶກສັຈຈະທັມຄວາມຈິງ ແຫ່ງອົງພຸດທະ ພຣະມະຫາໂພທິສັດ

ການປະໝາດ ປາມາດ ລ່ວງເກີນ ຕໍ່ພຣະບໍຣິມມະສາຣີຣິກະທາດ

ແຫ່ງອົງພຸດທະ ພຣະອໍຣະຫັນທັງຫຼາຍ

ການປະໝາດ ປາມາດ ລ່ວງເກີນ ຕໍ່ຮອຍພຣະບາທ

ແຫ່ງອົງພຸດທະ ອົງມະຫາບາຣະມີທັງຫຼາຍ

ການປະໝາດ ປາມາດ ລ່ວງເກີນ ບຽດບຽນ ທຳຮ້າຍ ທຳລາຍ

ຕໍ່ພຸດທະສະຖານ ສະຖານທີ່ສັກສິດ ທໍເຈດີທັງຫຼາຍ

ໄດ້ເຄີຍປະໝາດ ປາມາດ ລ່ວງເກີນ ບຽດບຽນ

ຕໍ່ອົງຄຸນພໍ່ແມ່ ຄູບາອາຈານ ຜູ້ມີບຸນຄຸນທັງຫຼາຍ

ຈະດ້ວຍຄວາມຮູ້ສຶກນຶກຄິດ ດ້ວຍອາລົມໃດໆກໍ່ຕາມ

ດ້ວຍຄຳເວົ້າໃດກໍ່ຕາມ ດ້ວຍກິຣິຍາ ດ້ວຍພຶດຕິກຳທາງກາຍ

ທີ່ບໍ່ເໝາະສົມ ມາໃນຍຸກໜຶ່ງສະໄໝໃດ ກໍ່ຕາມ

ອະໂຫສິ ອະໂຫສິ ອະໂຫສິ

ກັມຊ້ອນທັມ (ກິເລດໃນທັມ)

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍຫລົງຕັ້ງເອົາ ຫລົງປະຕິບັດເອົາ

ຫລົງຈະເລີນເອົາ ໃນທາດ ໃນຂັນ

ໃນສະຕິ ໃນສະມາທິ ໃນປັນຍາທັງຫຼາຍ

ໃນຕະບະ ຊານຍານທັງຫຼາຍ ໃນລິດເດດອຳນາດທັງຫຼາຍ
ໃນອານຸພາບທັງຫຼາຍ ໃນຄວາມຍິ່ງໃຫ່ຍທັງຫຼາຍ
ແມ່ນແຕ່ໃນພຣະນິພານ ກໍ່ຕາມ

ຈິນເກີດເປັນຄວາມພາກພຽນພະຍາຍາມ

ໃນການບີບບັງຄັບກາຍໃຈຕົນເອງ

ດ້ວຍຮູບແບບແລະວິທີການຕ່າງໆ ດ້ວຍວິຖີຈິດຕ່າງໆ
ຈິນກາຍເປັນຕັນຫາຄວາມຢາກ ກາຍເປັນໂມຫະຄວາມຫລົງ
ກາຍເປັນອຸປະທານຄວາມຍຶດຕິດໃນທັມ

ຈິນເກີດເປັນກັມຊ້ອນທັມ ກັມຊ້ອນທາດ ກັມຊ້ອນຂັນ ບໍ່ຈົບບໍ່ສິ້ນ

ຕໍ່ພົບ ຕໍ່ຊາດ ຕໍ່ກັນ ຕໍ່ກັບ ຕໍ່ພຸດທັນດອນ

ແລະ ໄດ້ນຳພາສູ່ການສືບທອດສິດສອນ

ສູ່ດວງຈິດດວງໃຈຂອງບຸກຄົນອື່ນ ໃນແຕ່ລະຊັ້ນແຕ່ລະພູມ

ໃຫ້ຕັ້ງເອົາ ໃຫ້ປາດຖະໜາເອົາ

ກາຍເປັນຕັນຫາຄວາມຢາກ ກາຍເປັນອຸປະທານຄວາມຍຶດຕິດ

ກາຍເປັນໂມຫະຄວາມຫລົງ

ຈຶ່ງເກີດຄວາມວົກວົນ ໃນທາດ ໃນຂັນ

ບໍ່ຖືກຕ້ອງຕໍ່ພຣະສັຈຈະທັມຄວາມຈິງ

ບໍ່ຖືກຕ້ອງຕໍ່ການປົງວາງໃນຕົວຂອງມັນເອງ

ບໍ່ຖືກຕ້ອງຕໍ່ນິພານຢູ່ແລ້ວ

ຈຶ່ງກໍ່ເກີດກຳລະນິກັມ ແລະການໄດ້ຮັບຜົນແຫ່ງກັມໄປໃນຊັ້ນພູມຕ່າງໆ

ຮ່ວມເຖິງເຂດແດນພິເສດແຫ່ງການໃຊ້ກັມ

ໃນທຸກໆເຂດແດນທັງໝົດ ທັງສິ້ນ

ອະໂຫສິ ອະໂຫສິ ອະໂຫສິ

ການໃຊ້ອຳນາດຈິດຜິດ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ທີ່ໄດ້ເຄີຍຫລົງໃຊ້ອຳນາດຈິດທັງຫຼາຍ

ເຄີຍໃຊ້ອຳນາດສະຕິ ອຳນາດສະມາທິ ອຳນາດຕະບະຊານຍານ

ສ້າງໄສຍະສາດ ອະວິຊາ ເລ່ກົນ ມົນດຳ

ໃນການແຊກແຊງ ເຂົ້າຄອບງຳ ບຽດບຽນ ທຳຮ້າຍ ທຳລາຍ

ສັບພະຊີວິດທັງຫຼາຍ ບຸກຄົນອື່ນທັງຫຼາຍ ສັບພະສັດທັງຫຼາຍ
ໃນໂລກກະທາດແລະສັງສາຣະວັດທັງຫຼາຍ ຫຼື ຕໍ່ອົງມະຫາບາຣະມີ
ຕໍ່ໝໍ່ເນື້ອພຸດທາງກູນ ຕໍ່ພຣະໂພທິສັດ ພຣະມະຫາໂພທິສັດ
ອົງປັດເຈກກະພຸດທະເຈົ້າທັງຫຼາຍ

ຕໍ່ໝູ່ເຫລົ່າອະຣິຍະເຈົ້າ ອະຣິຍະສົງທັງຫຼາຍ
ຕໍ່ໝູ່ເຫລົ່າອໍຣະຫັນທັງຫຼາຍ ຫຼື ເຮັດໃຫ້ເກີດຄວາມຫລົງໄຫຼມົວເມົາ

ທັງຕໍ່ຕົນເອງແລະບຸກຄົນອື່ນ ກໍ່ຕາມ

ຫຼື ເພື່ອລາບສັກກາລະແຫ່ງຕົນ ກໍ່ຕາມ

ອະໂຫສິ ອະໂຫສິ ອະໂຫສິ

ສ້າງຄວາມແຕກແຍກໃນໝູ່ສົງ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍເປັນເຫດເຮັດໃຫ້ເກີດການຜິດຖຽງ

ແລະ ການແຕກແຍກທັງຫຼາຍ ໃນໝູ່ສົງ

ຫຼື ເຮັດໃຫ້ເກີດຄວາມເຂົ້າໃຈຜິດທັງຫຼາຍ ໃນໝູ່ສົງ

ເຮັດໃຫ້ທຸກຊີວິດຈິດວິນຍານທັງຫຼາຍ

ເກີດຮັກ ເກີດຊັງ ເກີດຄວາມເຂົ້າໃຈຜິດ ຕໍ່ນັກບວດທັງຫຼາຍ

ອະໂຫສິ ອະໂຫສິ ອະໂຫສິ

ການກີດກັນຂັດຂວາງ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍກີດກັນຂັດຂວາງ ເຄີຍທັກທ້ວງ

ໃນການໃຫ້ ການເສຍສະລະຂອງບຸກຄົນອື່ນທັງຫຼາຍ

ເຄີຍທັກທ້ວງ ເຄີຍຕຳນິ ຕິຕຽນ ຕໍ່ນັກບວດທັງຫຼາຍ

ຫຼື ເຄີຍກີດກັນຂັດຂວາງ ຕໍ່ບຸກຄົນອື່ນທັງຫຼາຍ

ໃຫ້ຫ່າງໄກຈາກຄຸນພຣະຣັຕນະໄຕຣ ຫ່າງໄກຈາກອົງບໍຣິມມະຄູ
ໃຫ້ຫ່າງໄກຈາກອົງມະຫາບາຣະມີ ວັດວາສາສໜາ

ສັຈຈະທັມຄວາມຈິງທັງຫຼາຍ

ເຄີຍກີດກັນຂັດຂວາງ ຕໍ່ການສະລະອອກບວດ

ຂອງພໍ່ ຂອງແມ່ ທັງຫຼາຍ

ເຄີຍກີດກັນຂັດຂວາງ ຕໍ່ການສະລະອອກບວດ

ຂອງຜົວ ຂອງເມຍ ທັງຫຼາຍ

ເຄີຍກີດກັນຂັດຂວາງ ຕໍ່ການສະລະອອກບວດ

ຂອງລູກຊາຍ ຂອງລູກສາວ ທັງຫຼາຍ

ຫຼື ເຄີຍກີດກັນຂັດຂວາງ

ຕໍ່ການສະລະອອກບວດຂອງບຸກຄົນອື່ນທັງຫຼາຍ

ເຄີຍກີດກັນຂັດຂວາງຕໍ່ການປະກາດສັຈຈະທັມຄວາມຈິງ

ແຫ່ງອົງພຸດທະ ອົງມະຫາໂພທິສັດ

ພຸດທະສາວົກ ພຸດທະສາວິກາ ມາໃນຍຸກໜຶ່ງສະໃໝໃດ ກໍ່ຕາມ

ເຄີຍກີດກັນຂັດຂວາງ

ໃນການສ້າງພຸດທະສະຖານ ສ້າງວັດວາອາຣາມ

ສ້າງບ່ອນພັກສົງທັງຫຼາຍ

ມາໃນຍຸກໜຶ່ງສະໃໝໃດ ກໍ່ຕາມ

ອະໂຫສິ ອະໂຫສິ ອະໂຫສິ

ກັມທີ່ເປັນເຫດໃຫ້ເກີດການເສື່ອມສັດທາ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍເປັນເຫດ ໃນການໃຊ້ຄວາມຄິດ ຄວາມເຫັນ ຄວາມໝາຍ

ຊີ້ນຳ ໃຫ້ທຸກຊີວິດຈິດວິນຍານທັງຫຼາຍ ບຸກຄົນອື່ນທັງຫຼາຍ
ໃຫ້ເສື່ອມສັດທາຈາກຄຸນພຣະຣັຕນະໄຕຣ
ເສື່ອມສັດທາຈາກໝູ່ສົງທັງຫຼາຍ

ເສື່ອມສັດທາຈາກສັຈຈະທັມຄວາມຈິງທັງຫຼາຍ

ຫຼື ເປັນການຫລົງຊີ້ນຳ ດ້ວຍຄວາມຄິດ ຄວາມເຫັນ ຄວາມໝາຍ

ດ້ວຍມານະຄວາມຖືຕົວ ດ້ວຍໂມຫະຄວາມຫລົງແຫ່ງຕົນເອງ

ເຮັດໃຫ້ເກີດຄວາມແຕກແຍກ

ແລະ ຄວາມເຂົ້າໃຈຜິດທັງຫຼາຍ

ທີ່ຜິດພາດຄາດເຄື່ອນໄປຈາກສັຈຈະທັມຄວາມເປັນຈິງທັງຫຼາຍ

ອະໂຫສິ ອະໂຫສິ ອະໂຫສິ

ໝໍ້ສິງ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍລະເມີດລ່ວງເກີນ ໃນຂອງສົງທັງຫຼາຍ

ຈະໃນຮູບແບບໜຶ່ງ ຮູບແບບໃດ ກໍ່ຕາມ

ການທີ່ໄດ້ເຄີຍຫາຢູ່ຫາກິນ ຫາລ້ຽງຊີວິດ

ກັບວັດວາສາສໜາທັງຫຼາຍ ກັບພຸດທະສະຖານທັງຫຼາຍ

ໄດ້ເຄີຍນຳເອົາຂອງສົງທັງຫຼາຍມາເປັນຂອງຕົນ

ໂດຍທີ່ບໍ່ໄດ້ຮັບອະນຸຍາດ

ແລະ ການເພິ່ງພາອາໃສ ການໃຊ້ສອຍວຽກງານພຣະພິກຂຸສົງ
ສາມະເນນ

ໃນລັກສະນະໜຶ່ງ ລັກສະນະໃດ ກໍ່ຕາມ

ອະໂຫສິ ອະໂຫສິ ອະໂຫສິ

ການຂັບໄລ່

ກັມອັນໃດທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍຂັບໄລ່ ພຣະພິກຂຸສົງ ຜູ້ມີສິລມີທັມທັງຫຼາຍ

ໃຫ້ອອກຈາກບ່ອນຢູ່ບ່ອນອາໃສ ໃນຖ້ຳກໍ່ຕາມ ໃນປ່າກໍ່ຕາມ

ໃນກຸດຕິວິຫານກໍ່ຕາມ ທີ່ໜຶ່ງທີ່ໃດກໍ່ຕາມ

ໄດ້ເຄີຍຂັບໄລ່ເນລະເທດ ຜູ້ມີອະທິວາດສະໜາບາຣະມີ

ຫຼື ບຸກຄົນອື່ນທັງຫຼາຍ ໃຫ້ອອກຈາກເຮືອນຊານ

ອອກຈາກບ້ານ ຈາກເມືອງ ໄປຢູ່ໃນບ່ອນລຳບາກທັງຫຼາຍ

ໄດ້ເຄີຍບຽດບຽນບ່ອນຢູ່ ບ່ອນອາໃສ

ຂອງສັດທັງຫຼາຍ ຂອງມະນຸດທັງຫຼາຍ

ຂອງເທວະດາທັງຫຼາຍ ຂອງອະມະນຸດທັງຫຼາຍ

ເຮັດໃຫ້ຢູ່ຍາກລຳບາກທັງຫຼາຍ ເຮັດໃຫ້ຢູ່ບໍ່ໄດ້ທັງຫຼາຍ

ອະໂຫສິ ອະໂຫສິ ອະໂຫສິ

ການເຮັດພຸດທະພານິດ (ການຊື້-ຂາຍ)

ກັມອັນໃດທີ່ຂະນ້ອຍທັງຫຼາຍ

ທີ່ໄດ້ເຄີຍສ້າງຮູບຫລຽນ ສັນຍາລັກຮູບເໝືອນ

ແຫ່ງອົງພຸດທະ ອົງມະຫາໂພທິສັດ

ພຣະອໍຣະຫັນທັງຫຼາຍ

ສ້າງປື້ມ ໜັງສື ທັມມະທັງຫຼາຍ

ເທັບທັມມະທັງຫຼາຍ ແຜ່ນຊີດີສັຈຈະທັມຄວາມຈິງທັງຫຼາຍ

ເພື່ອເປັນການຊື້ຂາຍ

ເພື່ອຫາລ້ຽງຊີວິດ ທັງຫຼາຍ

ອະໂຫສິ ອະໂຫສິ ອະໂຫສິ

ການນ້ອມນຳເອົາບາຣະມີໄປໃຊ້ໃນທາງທີ່ຜິດ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ທີ່ໄດ້ເຄີຍນ້ອມນຳເອົາບາຣະມີ ອັນເນື່ອງມາຈາກຄຸນພຣະຣັຕນະໄຕຣ

ແລະ ຈາກອະທິວາດສະໜາມະຫາບາຣະມີ

ນຳມາໃຊ້ໃນທາງທີ່ຜິດ

ເພື່ອສະໜອງກິເລດຕົນເອງ ແລະ ກິເລດບຸກຄົນອື່ນທັງຫຼາຍ

ບໍ່ໄດ້ເປັນໄປເພື່ອຄວາມສະຫວ່າງສະໄຫວຮ່ວມກັນ

ໃນທຸກຊີວິດຈິດວິນຍານທັງຫຼາຍ

ແລະນຳພາກັນໃຫ້ວົກວົນ ໃຫ້ຫລຸ່ມຫລົງມົວເມົາ
ໃນການໃຊ້ຊີວິດທັງຫຼາຍ

ໃນການເປັນການຢູ່ທັງຫຼາຍ ບໍ່ຖືກຕ້ອງຕາມພຸດທະປະສົງ

ທີ່ໃຫ້ຈັບຕາມ ດັບຕາມ ວາງຕາມ

ຕາມອົງພຸດທະ ຕາມອົງມະຫາບາຣະມີ ທັງຫຼາຍ

ອະໂຫສິ ອະໂຫສິ ອະໂຫສິ

ການຜິດຕໍ່ບຸກຄົນຕ້ອງຫ້າມ ໃນການຮ່ວມປະເວນີ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍຜິດຕໍ່ບຸກຄົນຕ້ອງຫ້າມ ທັງຫຼາຍ

ເຄີຍຜິດຕໍ່ພໍ່ ຕໍ່ແມ່ ທັງຫຼາຍ

ເຄີຍຜິດຕໍ່ພຣະໂພທິສັດ ທັງຫຼາຍ

ເຄີຍຜິດຕໍ່ຜົວບຸກຄົນອື່ນ ທັງຫຼາຍ

ເຄີຍຜິດຕໍ່ເມຍບຸກຄົນອື່ນ ທັງຫຼາຍ

ເຄີຍຜິດຕໍ່ຜູ້ມີສີລມີທັມ ທັງຫຼາຍ

ເຄີຍຜິດຕໍ່ນັກບວດ ທັງຫຼາຍ

ເຄີຍຜິດຕໍ່ລູກຫຼານບໍລິວານ ໝູ່ເພື່ອນ ທັງຫຼາຍ

ບໍ່ວ່າ ຈະດ້ວຍກາຍກໍ່ຕາມ ດ້ວຍວາຈາກໍ່ຕາມ ດ້ວຍໃຈກໍ່ຕາມ

ອະໂຫສິ ອະໂຫສິ ອະໂຫສິ

ກັມທີ່ເກີດຈາກການບໍ່ສົນໃຈສັຈຈະທັມ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍປະຕິເສດ ເຄີຍບໍ່ສົນໃຈ ຕໍ່ສັຈຈະທັມຄວາມຈິງ

ຕໍ່ການໃຫ້ປົງ ໃຫ້ວາງ ຕໍ່ຄວາມຫລຸດພົ້ນທາງໃຈທັງຫຼາຍ

ຕໍ່ການນຳພາເສຍສະລະແຫ່ງອົງມະຫາບາຣະມີ

ເພາະຍັງຫລົງເພິ່ງພໍໃຈ ໃນການເປັນການຢູ່ຂອງຕົນ

ຍັງຫລົງເພິ່ງພໍໃຈໃນສິ່ງທີ່ຕົນປາດຖະໜາທັງຫຼາຍ

ສິ່ງທີ່ນິຍົມທັງຫຼາຍ ຫຼື ໃນການບຳເພັນສະເພາະຕົນທັງຫຼາຍ

ຈົນເປັນເຫດໃຫ້ປະຕິເສດ ແລະ ບໍ່ສົນໃຈຕໍ່ຄຳບອກສອນ

ແຫ່ງອົງມະຫາບາຣະມີ ຫຼື ໝູ່ເຫລົ່າອໍຣະຫັນເຈົ້າທັງຫຼາຍ

ທີ່ໃຫ້ປົງ ໃຫ້ວາງ ໃຫ້ປ່ອຍ ໃຫ້ສະລະໃນຕົວຂອງມັນເອງ

ຈົນເປັນເຫດໃຫ້ຫລ້າຊ້າ ຫລ້າຫລັງ

ຕໍ່ສັຈຈະທັມຄວາມຈິງ ຕໍ່ຄວາມສະຫວ່າງສະໄຫວ

ອະໂຫສິ ອະໂຫສິ ອະໂຫສິ

ເຄີຍບໍ່ນອບນ້ອມ

ກັມອັນໃດທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍບໍ່ນອບນ້ອມ ເຄີຍຜິດຖຽງ

ເຄີຍຂັດແຍ້ງ ເຄີຍວິພາກ ວິໄຈ ວິຈານ

ເຄີຍຈົ່ມດ່າ ຕຳນິຕິຕຽນ ແລະ ຜິດຖຽງທັງຫຼາຍ

ກັບອົງມະຫາບາຣະມີ ຫຼື ຜູ້ມີບຸນຄຸນທັງຫຼາຍ

ນັກບວດທັງຫຼາຍ ຜູ້ມີສິລມີທັມທັງຫຼາຍ

ຫຼື ຕໍ່ບຸກຄົນໜຶ່ງບຸກຄົນໃດກໍ່ຕາມ

ຈົນເປັນເຫດເປັນປັດໄຈ

ໃຫ້ເກີດກັມວິບາກ ແກ່ຂະນ້ອຍທັງຫຼາຍ

ເປັນເຫດແຫ່ງຄວາມວິກວົນ ແລະ ຄວາມເສົ້າໝອງ

ໃນຈິດ ໃນໃຈ ທັງໝົດທັງສິ້ນ

ອະໂຫສິ ອະໂຫສິ ອະໂຫສິ

ການບຣຸດບຣຸມເຊິ່ງກັນແລະກັນ

ກັມອັນໃດ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍປະໝາດເຊິ່ງກັນແລະກັນ ທຳຮ້າຍ ທຳລາຍເຊິ່ງກັນແລະກັນ

ໄດ້ເຄີຍເຂັ່ນຂ້າ ພະຍາບາດ ຈອງກັມຈອງເວນເຊິ່ງກັນແລະກັນ

ເອົາປຣຸບເຊິ່ງກັນແລະກັນ ກົດຂີ່ຂົ່ມເຫັງເຊິ່ງກັນແລະກັນ

ຫຼື ກີດກັນຂັດຂວາງການເກີດ ເຮັດໃຫ້ລຸລູກ ເອົາລູກອອກ

ວາງຍາພິດ ຫຼື ໃຊ້ສານເຄມີທຳລາຍຊີວິດອື່ນ

ຫຼື ທຳລາຍຊີວິດອື່ນດ້ວຍການໃຊ້ໄຟເຜົາ

ຫຼື ດ້ວຍການເຮັດໃຫ້ຂາດອາກາດຫາຍໃຈ ເຮັດໃຫ້ຈົມນ້ຳຕາຍ

ຫຼື ຖົມດິນຝັງໃຫ້ຕາຍທັງເປັນກໍ່ຕາມ

ການທຳລາຍຊີວິດອື່ນດ້ວຍອາວຸດທັງຫຼາຍ

ການຫາລ້ຽງຊີວິດຕົນເອງ ດ້ວຍການທຳຮ້າຍຊີວິດອື່ນທັງຫຼາຍ

ໃນທຸກຂຸ່ມທຸກເຫລົ່າ

ອະໂຫສິ ອະໂຫສິ ອະໂຫສິ

ນ້ອມຂາບຂໍອະໂຫສິກັມ

ແລະ ນ້ອມຂາບຂໍຂະມາກັມ

ໃນເຫດແຫ່ງກັມທັງຫຼາຍ ທີ່ເລີ່ມຕົ້ນຈາກການຫລົງຕັ້ງເອົາມາ

ປາດຖະໜາເອົາມາ ຈົນກໍ່ເກີດກັມຫລວງຫຼາຍ

ມາເທື່ອລະເລັກເທື່ອລະໜ້ອຍ ຫຼາຍພົບ ຫຼາຍຊາດ

ຂະນ້ອຍທັງຫຼາຍ ນ້ອມຂາບຂໍຂະມາກັມ

ໃນຄວາມຜິດພາດທັງຫຼາຍ ທີ່ໄດ້ເຄີຍກ່ຽວຂ້ອງກັບອົງມະຫາບາຣະມີ

ກັບຜູ້ມີອະທິວາດສະໜາບາຣະມີທັງຫຼາຍ

ແບບບໍ່ລະມັດລະວັງ ແບບບໍ່ເໝາະສົມ

ຂະນ້ອຍທັງຫຼາຍ ນ້ອມຂາບຂໍຂະມາກັມ ທັງໝົດທັງສິ້ນ

ທັງຕໍ່ສັບພະສິ່ງທັງຫຼາຍ ທັງຕໍ່ທຸກຊີວິດຈິດວິນຍານທັງຫຼາຍ

ທີ່ກ່ຽວຂ້ອງ ມີເປັນ ແບບບໍ່ເໝາະສົມ

ຈົນກາຍເປັນກັມກ້ຽວພັນຮ່ວມກັນມາທັງໝົດ ທັງສິ້ນ

ເປັນໄລຍະເວລາອັນຍາວນານ

ຈຶ່ງກາຍເປັນເຫດ ແຫ່ງຜົນກັມວິບາກທັງຫຼາຍ

ເກີດທຸກຂະເວທະນາ ເກີດຄວາມເດືອດຮ້ອນລຳບາກ

ທັງທາງກາຍແລະທາງໃຈ ທັງຕໍ່ຕົນເອງແລະບຸກຄົນອື່ນ

ກາຍເປັນກັມຮ່ວມກັນ ກັບທຸກຊີວິດຈິດວິນຍານທັງຫຼາຍ
ໃນສັງສາຣະວັດ

ແລະ ກາຍເປັນບັນຫາໃຫ້ອົງມະຫາບາຣະມີ

ຕ້ອງລຳບາກໃນການຊ່ວຍແກ້ໄຂ

ເພື່ອໃຫ້ເຫດແຫ່ງກັມທັງຫຼາຍເບົາບາງລົງ

ຂະນ້ອຍທັງຫຼາຍ ນ້ອມຂາບຂໍຂະມາກັມ

ໃນເຫດແຫ່ງກັມທັງຫຼາຍ

ທີ່ໄດ້ເລີ່ມຕົ້ນຈາກການຫລົງຕັ້ງເອົາ ປາດຖະໜາເອົາມາ

ໃນທຸກສິ່ງ ທຸກຢ່າງ ທຸກເລື່ອງ

ນ້ອມຂາບຂໍຂະມາກັມ ຢ່າງໝົດຈິດໝົດໃຈ

ໃນທຸກໆກໍາລະນີກັມ

ຕັ້ງແຕ່ອະດີດຕະການຊາດ ຈົນເຖິງປະຈຸບັນນະການຊາດ

ຂໍອີງມະຫາບາຣະມີ ອົງພຸດທະ ມະຫາພຸດທະ

ທັງໝົດທັງມວນ ຂໍໃຫ້ໂຜດຊົງເປັນປະທານ

ຍົກໂທດ ອະໂຫສິກັມທັງຫຼາຍ ທັງປວງ

ໃຫ້ແກ່ຂະນ້ອຍທັງຫຼາຍ ໃນທຸກໝູ່ທຸກເຫລົ່າ ທຸກຊັ້ນທຸກພູມ

ຕັ້ງແຕ່ອະເວຈີມະຫານະລົກ ຈົນເຖິງພົມມະໂລກ
ຮ່ວມເຖິງເຂດແດນພິເສດແຫ່ງການໃຊ້ກັມທັງຫຼາຍ

ໃນທຸກໆເຂດແດນ

ຂໍໃຫ້ກັມທັງຫຼາຍ ທີ່ຍັງປິດກັ້ນ ປິດບັງ ຕໍ່ພຣະສັຈຈະທັມຄວາມຈິງ
ຕໍ່ພຣະນິພານ

ເພື່ງເປັນອະໂຫສິກັມ ເປັນໂມຂະກັມ
ຕັ້ງແຕ່ກາລເວລາບັດນີ້ເປັນຕົ້ນໄປ ຕາຫລອດກາລະນານດ້ວຍເຖີ້ນ

ເວົ້າພ້ອມກັນ: ອະໂຫສິ ອະໂຫສິ ອະໂຫສິ

ແລະ ຂະນ້ອຍທັງຫຼາຍ ຂໍໃຫ້ອະໂຫສິກັມ

ຕໍ່ທຸກໆຄົນ ທຸກໝູ່ທຸກເຫລົ່າ ທຸກຊັ້ນທຸກພູມ ທຸກດວງຈິດ
ທຸກດວງວິນຍານ

ທີ່ເຄີຍລ່ວງເກີນ ແລະ ບຽດບຽນຂະນ້ອຍທັງຫຼາຍມາ

ຂໍໃຫ້ກັມທັງຫຼາຍ ເພິ່ງເປັນອະໂຫສິກັມຮ່ວມກັນ

ທັງໝົດທັງສິ້ນ ດ້ວຍເຖີ້ນ

ອະໂຫສິ ອະໂຫສິ ອະໂຫສິ

ແລະຂະນ້ອຍທັງຫຼາຍ ຂໍປະຕິຍານ ຂໍອຸທິດຕົນ

ຈະເປັນຜູ້ທີ່ຊື່ສັດຕໍ່ການໃຫ້ການເສຍສະລະ ຕໍ່ການເກື້ອກູນ

ຕາມອົງມະຫາບາຣະມີ ແລະ ຖືກຕ້ອງຕໍ່ສັຈຈະທັມຄວາມຈິງ

ແຫ່ງຄວາມບໍ່ຍຶດຕິດໃນຕົວມັນເອງ

ຕໍ່ຄວາມສະຫວ່າງສະໄຫວໃນຕົວມັນເອງ ຕໍ່ຄວາມບໍ່ຂ້ອງບໍ່ຄາ

ໂດຍນິພານຢູ່ແລ້ວ ໂດຍບໍ່ເກີດບໍ່ດັບຢູ່ແລ້ວ ໂດຍບໍ່ຕິດບໍ່ຫລຸດຢູ່ແລ້ວ

ຂໍປະຕິຍານຕົນ ໃນການອຸປະໂຖກ ໃນການດຳຣິທາດຂັນ

ຈິດວິນຍານຂຶ້ນມາ ພຽງເພື່ອການໂຜດທຸກຊີວິດ

ຈິດວິນຍານທັງຫຼາຍ ເທົ່ານັ້ນ

ແບບບໍ່ມີຂອບເຂດ ໄປໃນໂລກກະທາດ ສັງສາຣະວັດທັງຫຼາຍ

ຕາມອົງມະຫາບາຣະມີ ດ້ວຍການຊ່ວຍກັນໃຫ້ຈົບຕາມ

ດັບຕາມ ແລະ ນຳພາທຸກຊີວິດຈິດວິນຍານທັງຫຼາຍ

ອອກຈາກທຸກ ອອກຈາກຄວາມຫລົງໃນຕົວມັນເອງທັງຫຼາຍ

ຕັ້ງແຕ່ເວລານີ້ເປັນຕົ້ນໄປເຖິງ

ເວົ້າພ້ອມກັນ: ສາທຸ ສາທຸ ສາທຸ

ການປະກາດຂໍໃຊ້ ຂໍແທນ

ໜີ້ຊີວິດທັງຫຼາຍ ໜີ້ແຮງງານທັງຫຼາຍ

ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍເພິ່ງພາຊີວິດອື່ນ ເພື່ອລ້ຽງຊີວິດຕົນເອງ

ຫຼື ໃຫ້ຊີວິດອື່ນເສຍສະລະຊີວິດເພື່ອຕົນເອງ

ເພື່ອຮັກສາຊີວິດຕົນເອງ ເພື່ອການເປັນຢູ່ຂອງຕົນເອງ
ເພື່ອເຂດແຄ້ວນດິນແດນ ເຮືອນຊານບ້ານເມືອງຂອງຕົນ

ຫຼື ເພື່ອອັນໃດກໍ່ຕາມ

ໜີ້ແຮງງານທັງຫຼາຍ ທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍເພິ່ງພາອາໄສແຮງງານຂອງບຸກຄົນອື່ນທັງຫຼາຍ

ແຮງງານຂອງທຸກຊີວິດ ຈິດວິນຍານທັງຫຼາຍ

ທີ່ເກີນຄວາມພໍດີ ເກີນອາໄສ ເກີນຄວາມຈຳເປັນ

ຈົນກາຍເປັນໜີ້ກັມກ່ຽວກັບເລື່ອງແຮງງານທັງຫຼາຍ

ໜີ້ກັມທີ່ມີຕໍ່ຜົວ ໜີ້ກັມທີ່ມີຕໍ່ເມຍ ທັງຫຼາຍ

ໜີ້ກັມທີ່ມີຕໍ່ ລູກຊາຍ ລູກສາວ ທັງຫຼາຍ

ຫຼື ໜີ້ກັມອັນໃດ ທີ່ມີຕໍ່ພໍ່ ຕໍ່ແມ່

ທີ່ຂະນ້ອຍທັງຫຼາຍ ໄດ້ເພິ່ງພາອາໃສຈາກການເກື້ອກູນ

ຈາກການສົງເຄາະຂອງ ພໍ່ ແມ່ ທັງຫຼາຍ

ຫຼື ໜີ້ກັມທີ່ມີຕໍ່ ລູກຫຼານບໍລິວານ ໝູ່ເພື່ອນ

ທີ່ຂະນ້ອຍທັງຫຼາຍ ໄດ້ເຄີຍເພິ່ງພາອາໃສ ໃຊ້ວຽກງານ

ຈົນເກີນຄວາມພໍດີ ຈົນກາຍເປັນໜີ້ກັມທັງຫຼາຍ

ໜີ້ຕໍ່ປະເທດຊາດບ້ານເມືອງ ໜີ້ຕໍ່ພາສີອາກອນທັງຫຼາຍ

ໜີ້ຕໍ່ຊັບແຜ່ນດິນທັງຫຼາຍ ໜີ້ຕໍ່ສັງຄົມທັງຫຼາຍ

ທີ່ຂະນ້ອຍທັງຫຼາຍໄດ້ເຄີຍລັກໂລບ

ເອົາຜົນປະໂຫຍດຈາກໂລກ ຈາກສັງຄົມ ຫຼາຍເກີນໄປ

ຈາກປະເທດຊາດບ້ານເມືອງຫຼາຍເກີນໄປ

ແລະ ໜີ້ກັມອັນໃດ ທີ່ມີຕໍ່ພຣະພິກຂຸສົງ ຕໍ່ໝູ່ສົງທັງຫຼາຍ

ໜີ້ຕໍ່ສາສໜາ ໜີ້ຕໍ່ສົງທັງໝົດທັງສິ້ນ

ຈາກການທີ່ໄດ້ລ່ວງເກີນໃນຂອງສົງທັງຫຼາຍ

ນຳເອົາຂອງສົງທັງຫຼາຍມາເປັນຂອງຕົນ

ໂດຍທີ່ບໍ່ໄດ້ຮັບອະນຸຍາດທັງຫຼາຍ

ຫຼື ສິ່ງໃດທີ່ໄດ້ຫາປະໂຫຍດຈາກຂອງສົງທັງຫຼາຍ

ຈາກວັດວາສາສໜາທັງຫຼາຍ

ຈົນກາຍເປັນໜີ້ສົງ ເປັນໜີ້ຕໍ່ສາສໜາ

ຫຼື ໜີ້ກັມອັນໃດ ທີ່ມີຕໍ່ອົງມະຫາບາຣະມີ

ໝູ່ເຫລົ່າອະຣິຍະເຈົ້າທັງຫຼາຍ ໝູ່ເຫລົ່າອະຣິຍະສົງທັງຫຼາຍ

ໝູ່ເຫລົ່າອໍຣະຫັນເຈົ້າທັງຫຼາຍ

ອົງມະຫາໂພທິສັດທັງຫຼາຍ ອົງປັດເຈກກະພຸດທະເຈົ້າທັງຫຼາຍ

ອົງພຸດທະ ອົງມະຫາພຸດທະ

ສິ່ງໃດທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍຮ້ອງຂໍໃນອະທິວາດສະໜາບາຣະມີ

ແຕ່ບໍ່ໄດ້ນຳໄປໃຊ້ເພື່ອການນຳພາໃຫ້ທຸກຊີວິດ

ຈິດວິນຍານທັງຫຼາຍ ໃຫ້ສະຫວ່າງສະໄຫວ

ດ້ວຍການຈິບຕາມ ດັບຕາມ ວາງຕາມ

ແຕ່ ນຳໄປສະໜອງກິເລດຂອງຜູ້ອື່ນ

ຫຼື ສະໜອງກິເລດຂອງຕົນເອງ

ແມ່ນແຕ່ ລູກຫຼານບໍລິວານ ໝູ່ເພື່ອນ ແຫ່ງຕົນເອງ

ຈົນກາຍເປັນໜີ້ກັມຕໍ່ອົງມະຫາບາຣະມີ

ຕໍ່ອະທິວາດສະໜາທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍໃຊ້ຂໍແທນ

ໃນໜີ້ກັມ ໜີ້ເວນ ທັງຫຼາຍ

ໃນທຸກໆປະເພດກັມ ແລະ ໜີ້ບຸນຄຸນທັງຫຼາຍ

ໜີ້ທີ່ມີຕໍ່ປະເທດຊາດບ້ານເມືອງທັງຫຼາຍ

ທັງມະນຸດແລະອະມະນຸດທັງຫຼາຍ

ຂໍໃຊ້ຂໍແທນ ດ້ວຍອະທິວາດສະໜາບາຣະມີທັງຫຼາຍ

ທີ່ເຄີຍມີມາແລ້ວ ແຕ່ປາງກ່ອນ ຈົນເຖິງປະຈຸບັນ

ຈະຫຼາຍກໍ່ຕາມ ຈະໜ້ອຍກໍ່ຕາມ

ຂໍໃຊ້ຂໍແທນ ດ້ວຍການບວດການບັນພະຊາ

ໃນບໍວອນພຸດທະສາສໜາ

ຂໍໃຊ້ຂໍແທນ ດ້ວຍການໃຫ້ມີສ່ວນໃນສິ່ງໃດກໍ່ຕາມ

ທີ່ໄດ້ຖືກຕ້ອງຕໍ່ສັຈຈະທັມຄວາມຈິງ

ຈະຫຼາຍກໍ່ຕາມ ຈະໜ້ອຍກໍ່ຕາມ

ຂໍໃຊ້ຂໍແທນ ດ້ວຍການທີ່ໄດ້ມີສ່ວນໃນເກື້ອກູນ

ການໃຫ້ ການເສຍສະລະ ການອຸປະຖາກ ອຸປະຖັມ

ຕໍ່ໝູ່ສົງອົງຄະເຈົ້າທັງຫຼາຍ

ຕໍ່ວັດວາສາສໜາທັງຫຼາຍ ຫຼື ຕໍ່ອົງມະຫາບາຣະມີກໍ່ຕາມ

ຂໍໃຊ້ຂໍແທນ ໃນໜີ້ກັມທັງຫຼາຍ

ດ້ວຍການມີສ່ວນໃນການໂຜດທຸກຊີວິດຈິດວິນຍານທັງຫຼາຍ
ຕາມອົງມະຫາບາຣະມີ

ຂໍໃຫ້ມີສ່ວນໂດຍທຸກທົ່ວໜ້າກັນ ໄປຕະຫລອດກາລະນານເຖີ້ນ

ເວົ້າພ້ອມກັນ: **ສາທຸ ສາທຸ ສາທຸ**

ການປະກາດສະລະ ປະກາດຖອນ
ເຫດແຫ່ງກັມແລະການສ້າງກັມມາ

ສິ່ງໜຶ່ງ ສິ່ງໃດ ທີ່ຍັງເປັນຄວາມອາໄລອາວອນ

ຄວາມຍຶດຕິດທັງຫຼາຍ ການຜູກມັດຜູກພັນທັງຫຼາຍ

ໃນບຸກຄົນກໍ່ຕາມ ໃນທຸກຊີວິດຈິດວິນຍານທັງຫຼາຍກໍ່ຕາມ

ໃນສິ່ງຂອງກໍ່ຕາມ ໃນຊັບສິນບັດກໍ່ຕາມ

ໃນບ່ອນຢູ່ບ່ອນອາໃສ ໃນປັດໄຈ 4 ກໍ່ຕາມ

ຫຼື ໃນສັບພະສິ່ງທັງຫຼາຍ

ອັນເກີດຂຶ້ນຈາກການທີ່ຂະນ້ອຍທັງຫຼາຍ

ໄດ້ເຄີຍປາດຖະໜາເອົາ ໄດ້ເຄີຍຫລົງຕັ້ງໃຈເພື່ອຈະເອົາ

ຫຼາຍພົບ ຫຼາຍຊາດ ຫຼາຍກັບ ຫຼາຍກັບ ຫຼາຍພຸດທັນດອນ

ຈົນກາຍເປັນຄວາມຫລົງຍຶດຕິດທັງຫຼາຍ

ແລະ ຄວາມອາໄລອາວອນທັງຫຼາຍ ຄວາມຜູກພັນທັງຫຼາຍ

ເຊິ່ງລ້ວນແລ້ວແຕ່ບໍ່ຖືກຕ້ອງຕໍ່ສັຈຈະທັມ
ຄວາມບໍ່ຍຶດຕິດໃນຕົວມັນເອງ

ຫຼື ຜິດພຸດທະປະສົງ ແລະ ບໍ່ເປັນໄປເພື່ອການໂຜດ

ທຸກຊີວິດຈິດວິນຍານທັງຫຼາຍ ຢ່າງກ້ວາງຂວາງ
ຕາມອົງມະຫາບາຣະມີ

ເປັນເຫດໃຫ້ຂະນ້ອຍທັງຫຼາຍ ຕ້ອງຫລົງຄັບແຄບຢູ່ສະເພາະຕົນ

ໃນສິ່ງທີ່ຕົນເອງຫລົງຍຶດຕິດຢູ່

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ທັງໝົດທັງສິ້ນ ໃນທຸກສິ່ງ ທຸກຢ່າງ ທຸກເລື່ອງ

ບໍ່ວ່າທາງໂລກກໍ່ຕາມ ຫຼື ທາງທັມກໍ່ຕາມ

ທີ່ໄດ້ເຄີຍປາດຖະໜາເອົາ

ເຄີຍຫລົງຕັ້ງໃຈຍຶດຕິດ ໃນທາດຂັນແຫ່ງຕົນເອງ

ຫຼື ທາດຂັນບຸກຄົນອື່ນ ຫຼື ໃນບຸກຄົນຕ້ອງຫ້າມທັງຫຼາຍ

ໃນຮູບ ຣົດ ກິ່ນ ສຽງ ສຳຜັດ

ການມະຄຸນ ທັມມະລົມໃຈ ໃນອາລົມ ແລະ ຄວາມຄິດທັງຫຼາຍ

ຊັບສິນບັດຕ້ອງຫ້າມທັງຫຼາຍ ສັບພະສິ່ງທັງຫຼາຍ

ການເປັນການຢູ່ ຄວາມຍຶດຕິດທັງໝົດທັງສິ້ນ

ຂໍສະລະ ຂໍຖອດຖອນ

ທຸກເງື່ອນໄຂ ທຸກຂໍ້ຜູກມັດທາງໃຈ

ທຸກຄຳອະທິຖານ ທຸກຄຳໝັ້ນສັນຍາ ທຸກຄຳອ້ອນວອນຮ້ອງຂໍ

ທຸກຄຳສາບແຊ່ງ ທຸກຄຳສາບານ ທຸກຄວາມພະຍາບາດ

ອາຄາດ ຄຽດແຄ້ນ ຄຽດຊັງ ຈອງເວນຈອງກັມທັງຫຼາຍ

ທີ່ໄດ້ໃຫ້ໄວ້ຕໍ່ສິ່ງໃດ ເຂດແຄ້ວນດິນແດນໃດກໍ່ຕາມ

ຕໍ່ໂລກກະທາດ ຕໍ່ສັງສາຣະວັດທັງຫຼາຍ

ຕໍ່ທຸກຊີວິດຈິດວິນຍານທັງຫຼາຍ ຕໍ່ບຸກຄົນທັງຫຼາຍ

ຫຼື ຕໍ່ຕົນເອງກໍ່ຕາມ

ອັນເປັນເຄື່ອງຈຳກັດ ເຮັດໃຫ້ເກີດຄວາມຄັບແຄບທັງຫຼາຍ

ເປັນພາລະ ບໍ່ອາດຈະກ້າວາງຂວາງ

ໄປໃນໂລກກະທາດ ແລະ ສັງສາຣະວັດ ໃນສັຈຈະທັມຄວາມຈິງ

ໃນການໂຜດທຸກຊີວິດຈິດວິນຍານທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ ປະກາດຖອນ

ການຕິດສິນບົນໃດໆ ຄຳບະໃດໆ ທີ່ໄດ້ຫລິງໃຫ້ໄວ້

ຕໍ່ບ່ອນໃດກໍ່ຕາມ ຕໍ່ມະນຸດທັງຫຼາຍ ອະມະນຸດທັງຫຼາຍ

ຕໍ່ສິ່ງສັກສິດທັງຫຼາຍ ຕໍ່ເຫລົ່າເທພເທວາ ຕໍ່ອົງຄຸນທັງຫຼາຍ

ຕໍ່ຄຸນພຣະຣັຕນະໄຕຣ ຕໍ່ໝູ່ເຫລົ່າອະຣິຍະເຈົ້າ ອະຣິຍະສົງທັງຫຼາຍ

ຕໍ່ອົງຄຸນເບື້ອງສູງ ແຫ່ງອົງມະຫາບາຣະມີ

ແຫ່ງອົງມະຫາໂພທິສັດ ແຫ່ງອົງພຸດທະ

ທີ່ເຄີຍຫລິງມີມາ ໃນທຸກສິ່ງ ທຸກຢ່າງ ທຸກເລື່ອງ

ເຊິ່ງຍັງເປັນເງື່ອນໄຂ ຂໍ້ຜູກມັດໃນດວງໃຈຂອງຂະນ້ອຍທັງຫຼາຍ

ເຮັດໃຫ້ຕິດຄ້າງໃນໜີ້ກັມທັງຫຼາຍ ໂດຍຮູ້ເທົ່າບໍ່ເຖິງການ

ຕັ້ງແຕ່ອະດີດຕະຊາດ ຈົນຮອດປະຈຸບັນຊາດ

ທີ່ຍັງຄົງສິ່ງຜົນສູ່ອະນາຄົດຕະການຊາດທັງຫຼາຍ

ຂະນ້ອຍທັງຫຼາຍຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ໃນອະທິວາດສະໜາ ໃນບາຣະມີ

ໃນຄວາມຢາກເປັນໃຫ່ຍທັງຫຼາຍ

ຂໍປະກາດສະລະ ປະກາດຖອນ ການຫລົງຕັ້ງເອົາ

ຄວາມຫລົງໄຫຼມົວເມົາ ໃນວາດສະໜາທັງຫຼາຍ

ບຸນຍາທິການທັງຫຼາຍ

ຂໍປະກາດສະລະ ປະກາດຖອນ

ການຫລົງຕັ້ງເອົາໃນອຳນາດຈິດທັງຫຼາຍ

ໃນການປະຕິບັດເອົາ ຈະເລີນເອົາ ບຳເພັນເອົາ

ໃນທາດ ໃນຂັນ ທັງຫຼາຍ ໃນຮູ້ ໃນເຫັນທັງຫຼາຍ

ໃນເອກະສະພາວະຄວາມເປັນຈິດໜຶ່ງ ໃນສະຕິ ສະມາທິ ປັນຍາ

ໃນລິດເດດ ອຳນາດທັງຫຼາຍ ໃນຕະບະ ຊານ ຍານທັງຫຼາຍ

ໃນມັຄຜົນນິພານທັງຫຼາຍ ຫຼື ຄວາມຫລຸດພົ້ນທັງຫຼາຍ

ທີ່ເປັນໂລກິຍະວິໄສ ແບບທີ່ຊາວໂລກເປັນຢູ່ທັງຫຼາຍ

ຈົນກາຍເປັນຕັນຫາຄວາມຢາກໃນທັມ ກາຍເປັນກິເລດໃນທັມ

ຈົນເປັນເຫດໃຫ້ປິດກັ້ນ ປິດບັງ

ຄວາມກ້ວາງຂວາງທັງຫຼາຍ ຄວາມບໍ່ມີເຂດແດນທັງຫຼາຍ

ຈົນກໍ່ເກີດຄວາມອຶດອັດຂັດຂ້ອງໝອງໃຈ

ຢູ່ທ່າມກາງທຸກຊີວິດຈິດວິນຍານທັງຫຼາຍ

ຂໍປະກາດສະລະ ປະກາດຖອນ ການຫລົງຕັ້ງເອົາ

ໃນທັມທັງຫຼາຍ ໃນຄຸນງາມຄວາມດີທັງຫຼາຍ

ຈົນກາຍເປັນຕິດຢູ່ໃນດີ ທັງຫຼາຍ

ຈົບບໍ່ເປັນ ດັບບໍ່ເປັນ ວາງບໍ່ເປັນ

ກາຍເປັນເຄື່ອງມືໃນການສ້າງກັມ ທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ໃນຜົນບຸນວາດສະໜາທັງຫຼາຍ

ທຸກຄັ້ງ ທຸກເທື່ອ ທີ່ໄດ້ຫລົງຕັ້ງເອົາມາທັງໝົດທັງສິ້ນ

ຈົນກາຍເປັນຜົນວິບາກ ຕ້ອງມາວົກວົນ

ໃນການໃຊ້ຜົນບຸນ ແຫ່ງຄຸນງາມຄວາມດີທັງຫຼາຍ

ເປັນການຫລົງຄັບແຄບ ບໍ່ກ້ວາງຂວາງໄປໃນ
ທຸກຊີວິດຈິດວິນຍານທັງຫຼາຍ

ທີ່ເປັນໂລກີຍະທັງຫຼາຍ ແລະ ປະຕິບັດເອົາ ແບບໂລກໆທັງຫຼາຍ

ທີ່ເປັນເລື່ອງຂອງປຸຖຸຊົນທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ໃນປັນຍາທັງຫຼາຍ ໃນຄວາມສະຫຼຽວສະຫຼາດ

ຄວາມປາດເປື່ອງທັງຫຼາຍ ໃນໄຫວພິບປະຕິພານ

ຄວາມຮອບຮູ້ທັງຫຼາຍ ຕາມຄະຕິນິຍົມຢ່າງໂລກໆ

ຈົນຈົບບໍ່ເປັນ ວາງບໍ່ເປັນ ມີແຕ່ຈະສ້າງກັມ ຫຼື ເອົາປັນຍາໄປສ້າງກັມ

ເອົາໄຫວພິບປະຕິພານ ຄວາມຮອບຮູ້ໄປສ້າງກັມ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ໃນເມດຕາທັງຫຼາຍ ໃນຄຸນນະທັມທັງຫຼາຍ

ອັນເປັນໂລກິຍະທັງຫຼາຍ ທີ່ຈົບບໍ່ເປັນ ດັບບໍ່ເປັນ

ລ້ວນແລ້ວແຕ່ນໍາພາ ທັງຕົນເອງ ແລະ ລູກຫຼານບໍລິວານ

ໝູ່ເພື່ອນທັງຫຼາຍ ສູ່ການສ້າງກັມ ປະເພດຍຶດເຍື້ອຍາວນານ

ຫຼ້າຊ້າ ຫຼ້າຫລັງ

ຂໍປະກາດສະລະ ປະກາດຖອນ ການຫລົງຕັ້ງເອົາ

ໃນຄວາມເປັນຜູ້ທີ່ມີລູກຫຼານບໍລິວານ ໝູ່ເພື່ອນ ທັງຫຼາຍ

ຫຼື ຢາກມີລູກຫຼານບໍລິວານ ໝູ່ເພື່ອນ ທັງຫຼາຍ

ຂໍປະກາດສະລະ ປະກາດຖອນ ການຫລົງຕັ້ງເອົາ

ໃນລູກຫຼານບໍລິວານ ໝູ່ເພື່ອນ ທັງຫຼາຍ ທີ່ເຂົ້າກັບຕົນເອງໄດ້

ຖືກກັບກິເລດຕົນເອງ ຖືກກັບນິໄສຕົນເອງ

ຈິ່ງເປັນເຫດໃຫ້ຄັບແຄບຢູ່ສະເພາະຕົນແລະລູກຫຼານບໍລິວານຕົນ

ຫຼື ໝູ່ເພື່ອນ ທີ່ມີກັມອະນຸໃສຄືກັບຕົນ

ຈິ່ງເປັນເຫດ ເປັນປັດໃຈໃຫ້ກໍ່ເກີດກັມ

ໃນການສ້າງຄວາມແຕກແຍກທັງຫຼາຍ ສ້າງຄວາມແຕກຕ່າງທັງຫຼາຍ

ບໍ່ໄດ້ເປັນໄປເພື່ອການໂຜດ ທຸກຊີວິດຈິດວິນຍານທັງຫຼາຍ

ແບບບໍ່ມີເຂດແດນ ໄປໃນສັງສາຣະວັດທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ການຫລົງຕັ້ງເອົາ

ໃນອົງມະຫາບາຣະມີ ອັນເປັນເຫດແຫ່ງສ້າງກັມ
ເກີດຄວາມຫວງແຫນ ເກີດການກີດກັນຂັດຂວາງ

ຜິດຖຽງກັນ ບໍ່ຢາກໃຫ້ບຸກຄົນອື່ນໄດ້ດີຄືກັບຕົນເອງ
ເປັນເຫດແຫ່ງຄວາມຄັບແຄບ ແລະເປັນກັມອັນໃຫ່ຍຫລວງ

ປິດກັ້ນ ປິດບັງ ສັຈຈະທັມຄວາມຈິງ ນຳພາຕົນເອງສູ່ອະບາຍຍະພູມ

ປິດກັ້ນການໂຜດແບບບໍ່ມີເຂດແດນ ໄປໃນທຸກຊີວິດຈິດວິນຍານ
ໃນໂລກກະທາດແລະສັງສາຣະວັດ ທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ຄວາມຫລົງຍຶດຕິດ

ໃນອົງມະຫາບາຣະມີ ໃນໝູ່ເຫລົ່າຄູບາອາຈານທັງຫຼາຍ

ອົງບໍຣິມມະຄູທັງຫຼາຍ ພຣະບິດາທັງຫຼາຍ ພຣະມານດາທັງຫຼາຍ

ຈະຂໍເຄົາລົບ ຈະຂໍເທີດທູນ

ໂດຍເນື້ອຫາແຫ່ງມະຫາສູນຍະຕາ ໂດຍຄວາມບໍ່ຍຶດຕິດທັງຫຼາຍ

ຈະຂໍນ້ອມນຳມາເປັນແບບຢ່າງ

ໃນການໂຜດ ທຸກຊີວິດຈິດວິນຍານທັງຫຼາຍ

ແບບກ້ວາງຂວາງ ບໍ່ມີເຂດແດນ ບໍ່ຈຳເພາະເຈາະຈົງ
ໄປໃນທຸກຊີວິດຈິດວິນຍານທັງຫຼາຍ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ

ປະກາດຖອນ ຄວາມຫລົງຍຶດຕິດ

ໃນທາດຂັນແຫ່ງຕົນເອງ ໃນທາດຂັນແຫ່ງບຸກຄົນອື່ນ

ໃນສັບພະສິ່ງທັງຫຼາຍ ທີ່ອຸປະໂຫຼກຂຶ້ນມາ

ເພື່ອໃຊ້ ເພື່ອອາໄສ ໃນການຕິດຕໍ່ສື່ສານ

ໃນການໂຜດທຸກຊີວິດຈິດວິນຍານ

ຂະນ້ອຍທັງຫຼາຍ ຂໍປະກາດສະລະ ປະກາດຖອນ

ຄວາມຢາກ ຄວາມປາດຖະໜາ

ແລະ ການຫລົງຕ້ອງ ຫລົງຕັ້ງໃຈ ທີ່ຈະຍຶດຕິດທັງຫຼາຍ

ໃນທຸກສິ່ງ ທຸກຢ່າງ ທຸກເລື່ອງ

ຂໍສົ່ງຄືນ ສູ່ເນື້ອຫາສັຈຈະທັມຄວາມຈິງ

ແຫ່ງຄວາມບໍ່ຍຶດຕິດໃນຕົວມັນເອງ

ສູ່ເນື້ອຫາຂອງມະຫາສູນຍະຕາ

ໂດຍວ້າງຢູ່ແລ້ວ ໂດຍວາງຢູ່ແລ້ວ

ໂດຍປາສະຈາກເຂດແດນຢູ່ແລ້ວ

ບໍ່ມີເງື່ອນໄຂໃນຕົວມັນເອງຢູ່ແລ້ວ

ບໍ່ຕິດ ບໍ່ຫລຸດຢູ່ແລ້ວ ບໍ່ເກີດ ບໍ່ດັບຢູ່ແລ້ວ

ໄປຕະຫລອດກາລະນານເຖີ້ນ

ເວົ້າພ້ອມກັນ: **ສາທຸ ສາທຸ ສາທຸ**

ເລີກໂທດຜູ້ອື່ນ

ທີ່ທຸກກໍ່ຍ້ອນ ກິເລດຂອງຕົນເອງ

ທີ່ທຸກກໍ່ຍ້ອນ ບໍ່ໄດ້ດັ່ງກິເລດຂອງຕົນເອງ

ທີ່ທຸກກໍ່ຍ້ອນ ພະຍາຍາມທີ່ຈະໃຫ້ຄົນອື່ນ

ຕອບສະໜອງກິເລດຂອງຕົນເອງ

ແບບຜູ້ໂຜດ
ເພື່ອຄວາມປອງດອງ ເພື່ອຢູ່ຮ່ວມກັນໄດ້

ຮູ້ຈັກຂໍອະໂຫສິ ແລະ ໃຫ້ອະໂຫສິ

ເຖິງຕົນເອງຈະເປັນຜູ້ກະທຳ ຫຼື ຖືກກະທຳກໍ່ຕາມ

ບໍ່ຊໍ້າເຕີມຄົນທີ່ຜິດ ຈົນຕົວເອງກໍຜິດເສຍເອງ

ຮູ້ຈັກໃຫ້ອະໄພ ໃຫ້ໂອກາດ

ລົງໂທດແບບບໍ່ເກີດໂທດ ແກ່ຜູ້ລົງໂທດເອງ

ໂດຍການໃຫ້ທຳຄຸນໄຖ່ໂທດແທນ

ຮູ້ຈັກແບ່ງປັນຜົນປະໂຫຍດທີ່ໄດ້

ຕໍ່ໂລກ ຕໍ່ສັງຄົມສ່ວນລວມ ບໍ່ເລືອກຝ່າຍ

ເພິ່ງເປັນຜູ້ໃຫ້ ຕໍ່ສາສໜາ ຕໍ່ໂລກ ຕໍ່ສັງຄົມ

ເທົ່າທີ່ຈະທຳໄດ້ໄປຕະຫລອດການ

ຫລວງພໍ່ໂພສິສຸຣິຍະ ເຂມະຣະໂຕ

ບໍ່ເກີດ ບໍ່ດັບຢູ່ແລ້ວ

ວັດຣົ່ມໂພທິທັມ

ບ້ານຫລັກຮ້ອຍຫົກສິບ (160 km)
ຕຳບົນໜອງຫິນ ອຳເພີ ໜອງຫິນ
ຈັງຫວັດເລີຍ 42190

www.rombodhidharma.com

รายนามผู้ร่วมจัดพิมพ์เพื่อเผยแพร่

ผู้ร่วมบุญไม่ประสงค์ออกนาม	18,900 บาท
คุณเกียรติศักดิ์ วงศ์แสงอนันต์ และครอบครัว	1,200 บาท
คุณอันเดร นากาโน่ และ คุณอรทัย วิฉายา	1,200 บาท
ครอบครัว อุชชิน	500 บาท
แผนกบัญชี J.Siam GPS นางวริศรา ผนิดา นางสาวเฉลิมศรี วิชัยดิษฐ์ นางสาววราภรณ์ เหมทานนท์ นางสาวไปรยา ม่วงเพชร นางสาวทัตพิชา แววทอง นางสาวชลลดา แสงโต นางสาวมิทชา สนองชาลี นางสาววรารัตน์ คำนึง นางสาวสุชาวดี คำพันธ์ นายโชคชัย คำพร้อง	1,200 บาท
คุณวิจิตรา อภัยโส	1,000 บาท

ร่วมทำบุญทั้งหมด 24,000 บาท พิมพ์จำนวน 2,000 เล่ม

พิมพ์ถวายและแจกเป็นธรรมทาน

~~~~~~

พิมพ์ที่ : ***เจ.พี.คอมพิวกราฟฟิค*** **ศูนย์เผยแพร่หนังสือธรรมะ และบทสวดมนต์**
กทม. 147~147/1 ถนนนครสวรรค์ แขวงวัดโสมนัส เขตป้อมปราบศัตรูพ่าย กรุงเทพมหานคร 101000
สาขาลำปาง 355/41~43 ถนนบุญวาทย์(ฉัตรไชย) ตำบลสวนดอก อำเภอเมือง จังหวัดลำปาง 52000
โทร. 081~2850580, 085~0997685, 02~6298600, 02~6298668 แฟ็กซ์. 02~2810928
~~~~~~

ວັດຣິ່ມໂພທິທັມ
ບ້ານຫລັກຮ້ອຍຫົກສິບ (160 km)
ຕຳບົນໜອງຫີນ ອຳເພີ ໜອງຫີນ
ຈັງຫວັດເລີຍ 42190
www.rombodhidharma.com